# ບໍລິສັດ ບໍ່ລະພາ ເປີດກອງປະຊຸມຮ່ວມກັບ 4 ແຂວງ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

January 26, 2021




ບໍລິສັດ ບໍ່ລະພາ ກະສິກຳປ່າໄມ້ ຈຳກັດ ຮ່ວມກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈັດກອງປະຊຸມປຶກສາຫາລືຂັ້ນແຂວງ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ໂຄງການປູກໄມ້ວິກຢູ່ໃນນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ໄຊສົມບູນ ແລະ ແຂວງໄຊຍະບູລີ ເພື່ອເພີ່ມຂີດຄວາມເຂົ້າໃຈໃຫ້ພະນັກງານນຳໄປຜັນຂະຫຍາຍໃນທ້ອງຖິ່ນຕົນໃຫ້ສາມາດຂັບເຄື່ອນວຽກງານປູກໄມ້ປ້ອນໂຮງງານອຸດສາຫະກຳ.

ກອງປະຊຸມດັ່ງກ່າວຈັດຂຶ້ນວັນທີ 25 ມັງກອນ 2021 ທີ່ໂຮງແຮມເມີກຸວ ນະຄອນຫຼວງວຽງຈັນ ໂດຍເປັນປະທານຂອງ ທ່ານ ໄຊຍະເວດ ວິໄຊ ຫົວໜ້າກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ມີຮອງເຈົ້າແຂວງ, ຜູ້ອຳນວຍການ ບໍລິສັດ ບໍ່ລະພາ ກະສິກຳປ່າໄມ້ ຈຳກັດ ພ້ອມດ້ວຍເຈົ້າໜ້າທີ່ພາກລັດ, ພະນັກງານບໍລິສັດເຂົ້າຮ່ວມ.

ในภาพอาจจะมี 6 คน, ผู้คนกำลังนั่ง

ບໍລິສັດ ບໍ່ລະພາ ດຳເນີນທຸລະກິດໃນປະເທດລາວແຕ່ປີ 1989 ດ້ວຍທຶນຈົດທະບຽນທັງໝົດ 33 ລ້ານກວ່າໂດລາສະຫະລັດ, ມາຮອດປັດຈຸບັນລົງທຶນທັງໝົດ 53 ລ້ານກວ່າໂດລາສະຫະລັດ, ມີພະນັກງານທັງໝົດ 170 ຄົນ. ມາຮອດປັດຈຸບັນມີເນື້ອທີ່ໄມ້ປູກ 4.165 ເຮັກຕາ, ພື້ນທີ່ປ່າຜະລິດທີ່ຂຸດໂຊມທີ່ສຳເລັດການສຳຫຼວດຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້ ມີ 7.317 ເຮັກຕາ, ພື້ນທີ່ສວນປູກທີ່ໄດ້ຮັບການຢັ້ງຢືນ FSC 1.315 ເຮັກຕາ.

ບໍລິສັດ ພວມກໍ່ສ້າງໂຮງງານຫຼັງທີ 2 ເປັນໂຮງງານຜະລິດໄມ້ອັດ ຈະຜະລິດໃນເດືອນເມສາ 2021 ຄາດວ່ານຳໃຊ້ແຮງງານ 350 ຄົນ ໂດຍນຳໃຊ້ວັດຖຸດິບໃນສວນປູກຂອງບໍລິສັດ 1,3 ແສນແມັດກ້ອນຕໍ່ປີ ເພື່ອຜະລິດໄມ້ອັດໄດ້ 50 ພັນແມັດກ້ອນຕໍ່ປີ, ໃນນັ້ນ 5% ຂາຍພາຍໃນ ແລະ 95% ສົ່ງໄປຂາຍຕ່າງປະເທດ.

ในภาพอาจจะมี 4 คน, ผู้คนกำลังนั่ง

ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊ ຮອງອຳນວຍການ ບໍລິສັດບໍ່ລະພາ ໄດ້ກ່າວວ່າ: ບໍລິສັດບໍ່ລະພາ ໄດ້ດຳເນີນກິດຈະການປູກໄມ້ອຸດສາຫະກຳເພື່ອມາປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ເພື່ອຂາຍພາຍໃນ ແລະ ສົ່ງອອກໄປຕ່າງປະເທດ ເຊິ່ງໄດ້ດຳເນີນກິດຈະການຕ່າງໆ ພາຍໃຕ້

ລະບຽບ – ກົດໝາຍຂອງປະເທດເຮົາກໍານົດອອກຢ່າງເຄັ່ງຄັດ ເພື່ອນໍາເອົາຜົນປະໂຫຍດມາສູ່ປະຊາຊົນໃນທ້ອງຖິ່ນ, ສ້າງວຽກເຮັດງານທໍາ, ສ້າງເສດຖະກິດໃນຊົນນະບົດ, ສ້າງຜະລິດຕະພັນເພື່ອຈໍາໜ່າຍໃນສັງຄົມ ແລະ ສົ່ງຂາຍໄປຕ່າງປະເທດ.

ในภาพอาจจะมี 6 คน, ผู้คนกำลังนั่ง

ທ່ານ ຄໍາຊາຍ ສຸວັນທອງ ຮອງຫົວໜ້າພະແນກກະສິກໍາປ່າໄມ້ ແຂວງວຽງຈັນ ໄດ້ກ່າວວ່າ: ການດໍາເນີນກິດຈະການຂອງບໍລິສັດ ໄດ້ມີສ່ວນໃນການຂະຫຍາຍຕົວເສດຖະກິດພາຍໃນແຂວງ ສ້າງວຽກເຮັດງານທໍາໃຫ້ປະຊາຊົນ ເພື່ອສ້າງຄວາມໝັ້ນໃຈໃຫ້ປະຊາຊົນຍິ່ງຂຶ້ນສະເໜີບໍລິສັດ ເພີ່ມກິດຈະກໍາໃນການສຶກສາຊີວະນາໆພັນ ໃນສວນໄມ້ປູກພາຍຫຼັງການປູກເປັນແຕ່ລະໄລຍະ ໂດຍສະເພາະການເພີ່ມຂຶ້ນ ຫຼື ຫຼຸດລົງຂອງຊີວະນາໆພັນພາຍໃນສວນ ລວມທັງຜົນໄດ້, ຜົນເສຍ ແລະ ວິທີການແກ້ໄຂໃນແຕ່ລະໄລຍະ ຖ້າເຮັດໄດ້ຈະເປັນຜົນດີໃນການດໍາເນີນກິດຈະການ.

ในภาพอาจจะมี 8 คน

ໃນພິທີຕາງໜ້າການນໍາເມືອງປາກລາຍ ໄດ້ມີຄໍາເຫັນສະເໜີໃຫ້ບໍລິສັດລົງເກັບກໍາລາຍລະອຽດ ສວນປູກໃນພື້ນທີ່ຕົວຈິງຕື່ມ ໂດຍສະເພາະເນື້ອທີ່ປູກແລ້ວ ແລະ ເນື້ອທີ່ຍັງບໍ່ທັນປູກ. ພ້ອມນັ້ນ, ກໍສະເໜີໃຫ້ນໍາເອົາຂໍ້ມູນຕ່າງໆໃນການລົງທຶນປູກໄມ້ວິກລົງເຜີຍແຜ່ໃຫ້ປະຊາຊົນ ເພື່ອໃຫ້ປະຊາຊົນໄດ້ມີຂໍ້ມູນ ເພື່ອສົມທຽບກັບປູກພືດຊະນິດອື່ນວ່າມີຜົນກໍາໄລອັນໃດດີກວ່າ ເພາະເຫັນວ່າປະຊາຊົນມີຄວາມສາມາດໃນການລົງທຶນປູກເອງ ຫຼື ອາດຈະມີສ່ວນຮ່ວມນໍາບໍລິສັດ ຖ້າຫາກຜົນຜະລິດທີ່ອອກມາມີກໍາໄລດີ.

ໃນພິທີໄດ້ມີການຕັ້ງຄໍາຖາມຈາກຂະແໜງການກ່ຽວຂ້ອງໃນ 4 ແຂວງ ແລະ ການໃຫ້ຂໍ້ມູນລະອຽດຈາກບໍລິສັດ ເພື່ອໃຫ້ມີ ຄວາມເຂົ້າໃຈເປັນເອກະພາບນໍາໄປຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນ ເພື່ອພ້ອມກັນສ້າງເສດຖະກິດໃຫ້ມີຄວາມເຂັ້ມແຂງ.